Lesson 3 for October 18, 2025





# ຄວາມຊົງຈຳແຫ່ງພຣະຄຸນ



“ໃຫ້ບອກພວກເຂົາວ່າ ພຣະເຈົ້າ
ຢາເວ ພຣະເຈົ້າຂອງພວກເຈົ້າ
ໄດ້ເຮັດໃຫ້ແມ່ນ້ຳຈໍແດນແຫ້ງສຳ
ລັບພວກເຈົ້າ ຈົນກວ່າພວກເຈົ້າ
ທຸກໆຄົນ ຂ້າມໄປໄດ້ໝົດ ເໝ
ື້ອນດັ່ງທີ່ພຣະເຈົ້າຢາເວ ພຣະ
ເຈົ້າຂອງພວກເຈົ້າ ໄດ້ເຮັດໃຫ້ນ້ຳ
ທະເລແດງແຫ້ງລົງສຳລັບພວກ
ເຮົາ. ເພາະເລື່ອງນີ້ທຸກໆຄົນທີ່
ເທິງແຜ່ນດິນໂລກຈະຮູ້ວ່າ ພຣະ
ຫັດຂອງພຣະເຈົ້າຢາເວຊົງຣິດອຳ
ນາດຍິ່ງໃຫຍ່ເທົ່າໃດ ແລະ ພວກ
ເຈົ້າກໍຈະຢຳເກງພຣະເຈົ້າຢາເວ
ພຣະເຈົ້າຂອງພວກເຈົ້າສືບໄປ”

ຢຊ 4:23, 24

ລະດູໃບໄມ້ປົ່ງ. ຝົນ ແລະ ຫິມະໄດ້ລະລາຍຈົນເຮັດໃຫ້ແມ່ນ້ຳຈໍແດນຖ້ວມລົ້ນ, ນ້ຳໄດ້ໄຫລຢ່າງແຮງລົງສູ່ທະເລແດງ. ແມ້ແຕ່ໃນບໍລິເວນທີ່ຕື້ນທີ່ສຸດເຊັ່ນ—ທ່າສຳລັບຂ້າມແມ່ນ້ຳຈໍແດນ—ການຂ້າມແມ່ນ້ຳຈໍແດນແມ່ເປັນເລື່ອງອັນຕະລາຍຫລາຍ.

ແລ້ວປະຊາຊົນຈະຂ້າມແມ່ນ້ຳໄປໄດ້ແນວໃດ?, ທັງໆທີ່ມີຄົນແກ່ຊະຣາ, ຍິງທີ່ຕັ້ງຄັນ, ເດັກນ້ອຍ ແລະ ສັດລ້ຽງ?

ສຳລັບມະນຸດແລ້ວ ເປັນໄປບໍ່ໄດ້ ແຕ່ສຳລັບພຣະເຈົ້າແລ້ວ ງ່າຍຫລາຍ: “ຈົ່ງຊຳຣະຕົນເອງໃຫ້ບໍຣິສຸດ ແລະ ຂ້າມແມ່ນ້ຳຈໍແດນ.”





ການຂ້າມແມ່ນ້ຳຈໍແດນ (ຢຊ 3):

- ຈຳເປັນຕ້ອງມີຄວາມບໍຣິສຸດ
- ຄວາມອັດສະຈັນຂອງພຣະເຈົ້າ

ການຈື່ຈຳ ແລະ ການລືມ (ຢຊ 4):

- ໝາຍສຳຄັນແຫ່ງຄວາມຊົງຈຳ
- ອັນຕະລາຍສຳລັບການລືມ

ຫີນສີລາທີ່ມາຈາກແມ່ນ້ຳຈໍແດນ



# ການຂ້າມແມ່ນ້ຳຈໍແດນ
# (ຢຊ3)

# ຈຳເປັນຕ້ອງມີຄວາມບໍລິສຸດ

"ແລ້ວໂຢຊວຍກໍ່ສັ່ງປະຊາຊົນວ່າ, ຈົ່ງຊຳລະຕົນໃຫ້ບໍລິສຸດ ເພາະມື້ອື່ນພຣະເຈົ້າຢາເວຈະເຮັດການອັດສະຈັນໃນທ່າມກາງພວກເຈົ້າ.' " (ຢຊ 3:5)

ເປັນເວລາ 40 ປີ ທີ່ເມກໄດ້ສົ່ງສັນຍານໃຫ້ມາການຮື້ຖອນຄ້າຍແລະອອກເດີນທາງໄປຕັ້ງຄ້າຍຢູ່ບ່ອນໃໝ່ຕາມທີ່ຫີບພັນທະສັນຍາໄດ້ນຳພາ (ຈຊບຊ. 9:17; 10:33).



ເຖິງເວລາທີ່ຕ້ອງເຄື່ອນຍ້າຍຊຸມຊົນແລ້ວ. ພວກເຂົາໄດ້ຮື້ຄ້າຍທີ່ ຊິດທິມ Shittim ແລະໄດ້ຕັ້ງຄ້າຍຂຶ້ນເພາະວ່າໄດ້ຂ້າມແມ່ນ້ຳຈໍແດນເປັນເວລາສາມວັນ. ຈາກນັ້ນພວກເຂົາໄດ້ຮັບຄຳສັ່ງໃຫ້ຕິດຕາມຫີບພັນທະສັນຍາໄປທີ່ດິນແດນແຫ່ງພັນທະສັນຍາ (ຢຊ. 3:1-3).



ແຕ່ມີເງື່ອນໄຂໜຶ່ງ ຄື: (ຢຊ. 3:5). ພວກເຂົາຕ້ອງໄດ້ຮັບການຊຳລະໃຫ້ບໍລິສຸດ (ທຳຄວາມສະອາດເຄື່ອງນຸ່ງ ແລະຮ່າງກາຍ), ລະຖິ້ມຄວາມບາບ, ແລະ ເປີດໃຈຮັບຕໍ່ການເຊື່ອຟັງພຣະບັນຍັດຂອງພຣະເຈົ້າ

**ສັນຍາລັກທີ່ຫີບພັນທະສັນຍາໄດ້ມອບໄວ້**



ເຊື່ອຟັງພຣະເຈົ້າ (ພຣະບັນຍັດ 10 ປະການ)



ໄວ້ວາງໃຈໃນການເບິ່ງແຍງຂອງພຣະອົງ



ເຄົາລົບຜູ້ນຳທີ່ຖືກແຕ່ງຕັ້ງຈາກພຣະເຈົ້າ

# ຄວາມອັດສະຈັນຂອງພຣະເຈົ້າ

“ໃນທັນໃດນັ້ນນ້ຳທີ່ໄຫລມາຈາກທາງເໜືອກໍຢຸດໄຫລ ແລະ ໂຮມເຂົ້າກັນທີ່ເມືອງອາດາມ ຢູ່ໃກ້ກັບເມືອງຊາເຣທານ ສາຍນ້ຳທີ່ໄຫລລົງສູ່ທະເລຕາຍ ຖືກຕັດຂາດໝົດກົ້ງ ແລະ ປະຊາຊົນຈຶ່ງສາມາດຂ້າມນ້ຳໄປໃກ້ກັບເມືອງເຢຣີໂກໄດ້” (ຢຊ 3:16)




ພຣະເຈົ້າແມ່ນ “ຜູ້ທີ່ຊົງກະທຳການອັດສະຈັນແຕ່ຜູ້ດຽວ” (ພສສ. 72:18). ເພາະສະນັ້ນ, ເຮົາຈຶ່ງຍອມຮັບວ່າພຣະອົງເປັນພຣະເຈົ້າອົງດຽວ (ພສສ. 86:10); ພວກເຮົາຈື່ໃນການອັດສະຈັນທີ່ພຣະອົງຊົງເຮັດ (ພສສ. 77:11); ແລະເລົ່າເຖິງພຣະລາດສະກິດຂອງພຣະອົງ (ພສສ. 96:3).

ບໍ່ມີສິ່ງໃດຍາກຫລາຍເກີນໄປສຳລັບພຣະອົງ, ຜູ້ທີ່ຊົງສ້າງຊັບພະທຸກສິ່ງ (ຢຣມຢ. 32:17; ລກ 1:37). ດັ່ງນັ້ນພວກເຮົາຈຶ່ງວາງໃຈໄດ້ວ່າ ພຣະອົງສາມາດກະທຳສິ່ງອັດສະຈັນໃນຊີວິດຂອງພວກເຮົາໄດ້ເຊັ່ນກັນ (ພສສ. 107:8).

ການຂ້າມແມ່ນ້ຳຈໍແດນແມ່ນໜຶ່ງໃນສິ່ງທີ່ອັດສະຈັນ, ນັ້ນແມ່ນຊີ້ໃຫ້ເຫັນເຖິງການອັດສະຈັນທີ່ກຳລັງເກີດຂຶ້ນໃນໂຕຂອງພວກເຮົານັ້ນກໍຄື: ການເດີນທາງເຂົ້າສູ່ແຜ່ນດິນອານາອານ ແຫ່ງສະຫວັນ(ຊຄລຢ. 8:6-8).






# ການຈື່ຈຳ ແລະ ການລືມ
# (ຢຊ 4)

# ໝາຍສຳຄັນແຫ່ງຄວາມຊົງຈຳ

“ກ້ອນຫີນເຫລົ່ານີ້ຈະເປັນໝາຍສຳຄັນໃຫ້ປະຊາຊົນຮູ້ເຖິງສິ່ງທີ່ພຣະອົງໄດ້ກະທຳໃນພາຍຄັ້ງໜ້າ ເມື່ອລູກຫລານຂອງພວກເຈົ້າຖາມວ່າ, ກ້ອນຫີນເຫລົ່ານີ້ມີຄວາມໝາຍວ່າຢ່າງໃດຕໍ່ພວກເຈົ້າ? ກໍ່ໃຫ້ພວກເຈົ້າຕອບວ່າ ເມື່ອຫາມຫີບພັນທະສັນຍາຂອງພຣະເຈົ້າຂ້າມແມ່ນ້ຳຈໍແດນນັ້ນ ແມ່ນ້ຳນັ້ນກໍໄດ້ເຊົາໄຫລ, ກ້ອນຫີນນີ້ຈະເປັນສິ່ງເຕືອນປະຊາຊົນ. (ຢຊ 4:6-7 )

ໃນພຣະຄຳພີນັ້ນ, ໝາຍສຳຄັນຕ່າງໆມີຄວາມໝາຍຫລາຍຢ່າງ:



ສະແດງເຖິງການກະທຳອັນອັດສະຈັນ (1 ກສ 13:3)



ເປັນສັນຍາລັກຂອງບາງສິ່ງບາງຢ່າງ (ປຖມກ. 9:13)



ເປັນເຄື່ອງໝາຍຂອງການຊົງເຕືອນ(Ex. 12:13)



ເປັນສັນຍາລັກທີ່ເດັ່ນຊັດ (ອຊກ 20:20)



ເປັນເຄື່ອງເຕືອນຄວາມຊົງຈຳ(ປຖມກ. 28:18)

ຫີນ 12 ກ້ອນ ທີ່ນຳມາຈາກແມ່ນ້ຳຈໍແດນ ເຊິ່ງໂຢຊວຍໄດ້ຕັ້ງໄວ້ເປັນໝາຍສຳຄັນນັ້ນ, ໄດ້ກາຍມາເປັນ: ຄວາມຊົງຈຳ

ນອກເໜືອຈາກຄວາມຊົງຈຳແລ້ວ, ພຣະເຈົ້າຊົງມີພຣະປະສົງອັນໃດເມື່ອຊົງຂໍໃຫ້ສ້າງກອງຫີນເຫລົ່ານີ້ຂຶ້ນ(ຢຊ. 4:6-7)?

ຄົນລຸ້ນໃໝ່ຈຳເປັນຕ້ອງໄດ້ຮູ້ເຖິງສິ່ງທີ່ພຣະເຈົ້າໄດ້ຊົງກະທຳ. ຄວາມເຊື່ອຂອງພວກເຂົາຕ້ອງຕັ້ງຢູ່ບົນພື້ນຖານການອັດສະຈັນຂອງພຣະເຈົ້າ. ມັນເປັນຄວາມຮັບຜິດຊອບຂອງພໍ່ແມ່ທີ່ຈະຖ່າຍທອດຄວາມຮູ້ເຫລົ່ານີ້ໃຫ້ກັບລູກຫລານ (ພບຍສ. 4:9). ໂດຍຄວາມຮູ້ນີ້, ແຕ່ລະຄົນຕ້ອງດຳເນີນຊີວິດດ້ວຍຄວາມເຊື່ອຂອງຕົນເອງ



# ອັນຕະລາຍຂອງການລືມ

“ປະຊາຊົນອິດສະຣາເອນໄດ້ລືມໄລພຣະເຈົ້າຢາເວພຣະເຈົ້າຂອງພວກຕົນ; ພວກເຂົາໄດ້ເຮັດບາບຕໍ່ສາຍຕາພຣະເຈົ້າຢາເວ ແລະ ຂາບໄຫວ້ຮູບເຄົາຣາບາອານ ແລະ ເຈົ້າແມ່ນອາເຊຣາ” (ພຜປຄ 3:7)

ໃນການຕັ້ງຫີນທີ່ລະນຶກ 12 ກ້ອນຢູ່ເມືອງກີລາກາ, ໂຢຊວຍໄດ້ເນັ້ນເຖິງສອງຈຸດ (ໂຢຊວຍ 4:23):



ພຣະເຈົ້າຊົງເຮັດໃຫ້ທະເລແດງແຫ້ງຕໍ່ໜ້າພວກເຂົາ(ໂຢຊວຍ, ຄາເລັບ ແລະ ຄົນບໍ່ຫລາຍທີ່ຍັງມີຊີວິດຢູ່ ຈາກຍຸກທີ່ອອກມາຈາກເອຢິບ)



ພຣະເຈົ້າຊົງເຮັດໃຫ້ແມ່ນ້ຳຈໍແດນແຫ້ງໄປຕໍ່ໜ້າພວກເຂົາ(ຄົນລຸ້ນໃໝ່ເກີດທີ່ທະເລຊາຍ ແລະ ຖືກກຳນົດໃຫ້ເຂົ້າໄປພິຊິດຄານາອານ)



ຄົນລຸ້ນໃໝ່ກຳລັງຕົກຢູ່ໃນອັນຕະລາຍທີ່ຈະເຮັດຜິດພາດເຊັ່ນດຽວກັນກັບພໍ່ແມ່ຂອງພວກເຂົາ ນັ້ນກໍ່ຄື: ການລືມພາລະກິດອັນຍິ່ງໃຫຍ່ຂອງພຣະເຈົ້າ. ເປັນຕາເສຍດາຍພວກເຂົາລືມ ແລະ ຕ້ອງໄດ້ຮັບໂທດທີ່ຕາມມາ (ພຜປຄ 3:7-8).



ດັ່ງນັ້ນມັນຈຶ່ງເປັນເລື່ອງທີ່ສຳຄັນຢ່າງຍິ່ງທີ່ພວກເຮົາຈະຈົດຈຳເຖິງວິທີທີ່ພຣະເຈົ້າຊົງເບິ່ງແຍງບັນພະບຸຣຸດຂອງພວກເຮົາ ແລະ ຊ່ວງເວລາທີ່ພວກເຮົາຈະໄດ້ເຫັນພຣະຫັດອັນຍິ່ງໃຫຍ່ຂອງພຣະອົງດ້ວຍຕາຂອງພວກເຮົາເອງໃນວັນທີ່ພຣະອົງສະເດັດມາ





# ຫີນສິລາທີ່ມາຈາກ
# ແມ່ນ້ຳຈໍແດນ



"ພຣະອົງໄດ້ປ່ຽນທະເລເລິກໃຫ້ເປັນດິນແຫ້ງໄປ ປູ່ຍ່າຕາຍາຍຂອງພວກເຮົາໄດ້ຍ່າງຂ້າມນໍ້ານັ້ນ ຢູ່ທີ່ນັ້ນພວກເພິ່ນຕ່າງກໍຊົມຊື່ນຍິນດີ ເພາະສິ່ງທີ່ພຣະອົງໄດ້ກະທຳນັ້ນ!" (ພສສ66:6 )

"ທະເລແດງໄດ້ຫລຽວເບິ່ງ ແລະປົບໜີໄປ, ແມ່ນໍ້າຈໍແດນໄດ້ຢຸດໄຫລແລ້ວກໍ່ໄຫລຄືນມາອີກ (ພສສ 114:3)





ການຂ້າມທະເລແດງ ແລະການຂ້າມແມ່ນໍ້າຈໍແດນເປັນສອງເຫດການທາງປະຫວັດສາດທີ່ເຊື່ອມໂຍງກັນ, ເປັນເຫດການທີ່ສຳຄັນໃນປະຫວັດສາດແຫ່ງການໄຖ່ບາບ (ພສສ. 66:6; ພສສ. 114). ເມື່ອເອົາທັງສອງເຫດການມາລວມກັນແລ້ວ ກໍ່ປຽບເໝືອນກັບເຄື່ອງໝາຍແຫ່ງການປົດປ່ອຍພວກເຮົາອອກຈາກຄວາມບາບ ແລະ ການທີ່ພວກເຮົາຈະເຂົ້າໄປເຖິງຊີວິດອັນນິຣັນດອນ.

ການຂ້າມແມ່ນໍ້າຈໍແດນຢ່າງອັດສະຈັນ ແລະ ການຖືກຮັບຂຶ້ນໄປເຂົ້າເຝົ້າພຣະເຈົ້າທີ່ສະຫວັນ ເປັນຄວາມຈິງສຳລັບເອລີຢາ (2 ກສ 2:1, 7, 8, 11).

ສຳລັບເອລີຊາແລ້ວ, ເຫດການດຽວກັນນີ້ເປັນສັນຍານຂອງການໄດ້ຮັບພຣະວິນຍານບໍຣິສຸດ ເຊິ່ງເຮັດໃຫ້ລາວສາມາດເຮັດພັນທະກິດໃຫ້ສຳເລັດໄດ້ (2 ກສ 2:14-15).

ການລົງໄປທີ່ແມ່ນໍ້າຈໍແດນມີຜົນເຊັ່ນກັນກັບພຣະເຢຊູ ຜູ້ຊຶ່ງໄດ້ຮັບຣິດເດດຈາກພຣະວິນຍານບໍຣິສຸດ ເພື່ອເຮັດພັນທະກິດໃຫ້ສຳເລັດ ນັ້ນກໍ່ຄື: ການປົດປ່ອຍພວກເຮົາອອກຈາກຄວາມບາບ ແລະ ປະທານຊີວິດອັນນິຣັນດອນໃຫ້ (ມລກ 1:9-11; ຢຮ 1:29; 3:16).



“ຈົ່ງໃຫ້ພວກເຮົາລະນຶກເຖິງພຣະກິດຕິຄຸນຂອງພຣະເຈົ້າ, ແລະ ພຣະເມດຕາອັນເລີກເຊິ່ງຂອງພຣະອົງ, ໃຫ້ພວກເຮົາຕັ້ງສິລາແຫ່ງຄໍາພະຍານຂອງພວກເຮົາ ແລະ ຈາລຶກເລື່ອງລາວອັນລໍ້າຄ່າຂອງສິ່ງທີ່ພຣະເຈົ້າຊົງກະທໍາເພື່ອພວກເຮົາໄວ້ເທິງສິລາເຫລົ່ານັ້ນ. ແລະ ໃນຂະນະທີ່ພວກເຮົາໄດ້ທົບທວນການປະຕິບັດວຽກງານຂອງພຣະອົງ, ຂໍໃຫ້ພວກເຮົາປະກາດດ້ວຍຄວາມປຽມລົ້ນແລະດ້ວຍໃຈທີ່ປິຕິຍິນດີວ່າ:ຍ້ອນພຣະຄຸນຄວາມດີທີ່ມີຕໍ່ຂ້ານ້ອຍທຸກປະການ ຂ້ານ້ອຍຈະຖວາຍຫຍັງແດ່ແກ່ພຣະເຈົ້າຢາເວ? ຂ້ານ້ອຍຈະຖວາຍເຫລົ້າອະງຸ່ນຢ່າງດີແກ່ອົງພຣະຜູ້ເປັນເຈົ້າ ເພື່ອຂອບພຣະຄຸນພຣະອົງທີ່ຊ່ວຍຂ້ານ້ອຍໃຫ້ພົ້ນ, ຂ້ານ້ອຍຈະຖວາຍສິ່ງທີ່ໄດ້ສາບານໄວ້ກັບພຣະເຈົ້າຢາເວໃນທີ່ຊຸມນຸມຊົນທັງປວງຂອງພຣະອົງນັ້ນ." ພສສ 116:12-14”

EGW (The Desire of Ages, p. 348)